ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ

ກອງສະໜາມບິນລາວ

ເລກທີ 2622 ກສລ

ນະຄອນຫລວງວຽງຈັນ, ວັນທີ 18 ມິຖຸນາ 2024

# ຫນັງສືແຈ້ງເຊີນປະມູນເປີດກວ້າງ

1. ກອງສະໜາມບິນລາວ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸທິເຫມາະສົມ ເຂົ້າຍື່ນຊອງປະມູນ ສໍາລັບວຽກຕັດຫຍ້າ, ຖາງປ່າ, ປົວລະບັດຮັກສາສວນດອກໄມ້, ອະນາໄມ ແລະ ລອງຮ່ອງລະບາຍນໍ້າສະໜາມບິນໄຊຍະບຸລີ, ໄລຍະການປະຕິບັດວຽກແມ່ນ 03 ປີ ແລະ 03 ເດືອນ, ນັບແຕ່ວັນທີ 01 ຕຸລາ 2024 ຫາ 31 ທັນວາ 2027;
2. ການປະມູນ ຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດຫມາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸທິເຫມາະສົມ, ມີໃບອະນຸຍາດດໍາເນີນທຸລະກິດຖືກຕ້ອງຕາມກົດຫມາຍ ທີ່ກ່ຽວພັນກັບການບໍລິການຕັດຫຍ້າ ຕາມເດີນບິນ, ໂຮງແຮມ, ຮ້ານອາຫານ ແລະ ສະຖານທີ່ທ່ອງທ່ຽວ ຈາກພະແນກກະສິກໍາ ແລະ ປ່າໄມ້ ປະຈໍາປີ 2024;
4. ບໍລິສັດທີ່ມີຄຸນນະວຸທິເຫມາະສົມ ສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ກອງສະໜາມບິນລາວ, ຜູ້ຮັບຜິດຊອບ: ທ່ານ ຈັນມະນີ ຄູນໄຊຍະບົວສີ ໂທລະສັບ: 020 55686696 ແລະ ທ່ານ ນາງ ດາລີນ້າ ພົມມະຈັກ ໂທລະສັບ: 020 55002931 ໃນເວລາລັດຖະການ;
5. ບໍລິສັດໃດ ທີ່ຕ້ອງການຊື້ເອກະສານປະມູນຄົບຊຸດເປັນພາສາລາວ ຕ້ອງຍື່ນຫນັງສືສະເຫນີຫາ ທີ່ຢູ່ຂ້າງລຸ່ມນີ້, ເລີ່ມແຕ່ວັນທີ 19 ມິຖຸນາ 2024 ເປັນຕົ້ນໄປ, ໃນລາຄາ 3,000,000 ກີບ ຫລື ເປັນສະກຸນເງິນອື່ນທຽບເທົ່າ, ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ. ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ;
6. ຊອງປະມູນຕ້ອງສົ່ງທີ່ຢູ່ລຸ່ມນີ້,ໃນເວລາ ຫລື ກ່ອນເວລາ 09:00 ນາທີ ຂອງວັນທີ 25 ກໍລະກົດ 2024 ທີ່ຫ້ອງປະຊຸມເບີ 03 ກອງສະໜາມບິນລາວ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆ ຊອງຈະໄດ້ເປີດໃນເວລາ 09:10 ນາທີ ຂອງວັນທີ ແລະ ສະຖານທີ່ຮັບຊອງປະມູນ ໂດຍຊ້ອງຫນ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນໍາຕາມສະຖານທີ່ຂ້າງລຸ່ມນີ້;
7. ທຸກໆ ຊອງປະມູນຕ້ອງໄດ້ມີໜັງສືຄໍ້າປະກັນການປະມູນຈາກທະນາຄານ, ເງິນສົດ ຫລື ແຊັກເງິນສົດ(ວິຊາທະນາຄານ) ຢ່າງໜ້ອຍບໍ່ໃຫ້ຫລຸດ 2% ຂອງລາຄາສະເໜີເຂົ້າປະມູນ.
8. ທີ່ຢູ່: ກອງສະໜາມບິນລາວ, ໂທລະສັບ: 021 520542. ສໍານັກງານຕັ້ງຢູ່: ສະໜາມບິນສາກົນວັດໄຕ, ເມືອງສີໂຄດຕະບອງ, ນະຄອນຫລວງວຽງຈັນ.

ເຊັນແທນ ຫົວໜ້າກອງ

ຮອງຫົວໜ້າກອງ

ຄໍາສະຫວັນ ສີສົມບູນ

Khamsavan SYSOMBOUN